# ບົດບັນທຶກເຮັດວຽກ

## ລະຫວ່າງພະແນກສຶກສາທິການແລະກິລາແຂວງ ບໍລິຄຳໄຊ ສປປ ລາວ ກັບວິທະຍາໄລແພດສາດຮ່າຕິ້ງ, ວ/ລ ວັດທະນາທຳ,ກິລາ ແລະ ທ່ອງທ່ຽວຫວຽນຢູ, ວ/ລ ເຕັກນິກວິຊາຊີບ ແຂວງ ຮ່າຕິ້ງ ສສ ຫວຽດນາມ .

ໃນວັນທີ 11 ເດືອນ ພຶດສະພາ ( 5 ) 2017 ໃນເວລາ 9:00 ໂມງ ຢູ່ທີ່ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາແຂວງ ບໍລິຄຳໄຊ ສປປລາວ ໄດ້ຈັດຕັ້ງກອງປະຊຸມພົບປະແລກປ່ຽນປຶກສາຫາລືກ່ຽວກັບແຜນການກໍ່ສ້າງ ຊັບພະຍາກອນມະນຸດ ໃນສົກປີ 2017-2018 ລະຫວ່າງພະແນກສຶກສາທິການ ແລະ ກິລາແຂວງ ບໍລິຄຳໄຊ ກັບ ບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ້ງ ສສ ຫວຽດນາມ ມີຜູ້ເຂົ້າຮ່ວມຄື :

- ຄະນະຜູ້ແທນແຂວງບໍລິຄຳໄຊລວມມີ :

1. ທ່ານ ຄຳສີ ຍົມມະລາດ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ
2. ທ່ານ ເພັດລະຄອນ ສີວລີວັນ ຫົວໜ້າຂະແໜງອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ
3. ທ່ານ ພອນໄຊ ໄຊຍະສິດ ຫົວໜ້າຫ້ອງການບໍລິຫານ
4. ທ່ານ ຈັນທອນ ແສງຈັນເພັງ ອຳນວຍການ ມ ປາຍ ປາກຊັນ
5. ທ່ານ ນິພົນ ອ່ອນສຸລະທຸມ ອຳນວຍການ ມ ສ ປາກກະດິງ
6. ທ່ານ ຄຳພັນ ລາດຊະຈັກ ອຳນວຍການ ມ ສ ສີທ່ານາໄຊ
7. ທ່ານ ວິຍູ ສີຈະເລີນ ຫົວໜ້າຂະແໜງມັດທະຍົມສຶກສາ.

- ຝ່າຍແຂວງຮ່າຕິ້ງປະກອບມີ :

1. ທ່ານ ຫງວຽນວັນ ຮອງອຳນວຍການວິທະຍາໄລແພດສາດ
2. ທ່ານ ນາງ ດັ້ງຖີ້ຖຸຍຮັ່ງ ຮອງອຳນວຍການວິທະຍາໄລວັດທະນາທຳ,ກິລາແລະທ່ອງທ່ຽວຫງຽນຢູຮ່າຕິ້ງ
3. ທ່ານ ນາງ ຫງວຽນຖີ້ແທັງຢ່ານ ຮອງຫົວໜ້າຫ້ອງຄັດເລືອກນັກສຶກສາ ວິທະຍາໄລເຕັກໂນໂລຊີຮ່າຕິ້ງ
4. ທ່ານ ເຢືອງຫົວຮວ່າ ຮອງຫົວໜ້າຫ້ອງຈັດຕັ້ງ-ບໍລິຫານ ວິທະຍາໄລເຕັກໂນໂລຊີຮ່າຕິ້ງ
5. ທ່ານ ເລຈ້ອງຮ່ຽນ ພະນັກງານແປພາສາພະແນກການຕ່າງປະເທດ ແຂວງຮ່າຕິ້ງ

- **ເນື້ອເຮັດວຽກ:**

1. ສະຫລຸບວຽກງານຮ່ວມມືລະຫວ່າງສອງຝ່າຍໃນ ປີ 2016 ແລະປີ 2017
2. ວິທະຍາໄລແພດສາດຮ່າຕິ້ງ,ວລ ວັດທະນາທຳ,ກິລາ ແລະ ທ່ອງທ່ຽວຫວຽນຢູ,ວລ ເຕັກນິກວິຊາຊີບ ໄດ້ຮັບການກໍ່ສ້າງນັກຮຽນທີ່ຮຽນຈົບຊັ້ນ ມປາຍ ( ມ7 )ຂອງແຂວງ ບໍລິຄຳໄຊ ມາຮຽນພາສາຫວຽດນາມ ກັບບັນດາວິທະຍາໄລອ້ອມຂ້າງແຂວງ.
3. ເນື້ອໃນຮ່ວມມືຜັນຂະຫຍາຍໃນປີ 2017 ແລະ ໃນຊຸມປີຕໍ່ໜ້າລະຫ່ວາງພະແນກ ສກຂ ບໍລິຄຳໄຊ ກັບບັນດາ ວິທະຍາໄລອ້ອມຂ້າງແຂວງຮ່າຕິ່ງ.

   a. ສືບຕໍ່ຜັນຂະຫຍາຍບົດບັນທຶກການຮ່ວມມືກໍ່ສ້າງທີ່ທັງສອງຝ່າຍໄດ້ລົງນາມຮ່ວມກັນ.

b. ສືບຕໍ່ກໍ່ສ້າງນັກສຶກສາຮຽນຈົບຊັ້ນມັດທະຍົມສຶກສາຕອນປາຍ (ມ7) ບໍລິຄໍາໄຊມາຮຽນພາສາ ຫວຽດ ແລະ ວິຊາສະເພາະຢູ່ບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ່ງ ສສ ຫວຽດນາມ;

c. ແຕ່ລະປີບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ່ງ ສສ ຫວຽດນາມຈະແຈ້ງການລະອຽດໃຫ້ພະແນກສຶກສາທິການ ແລະ ກິລາແຂວງບໍລິຄໍາໄຊຊາບກ່ຽວກັບການຮັບກໍ່ສ້າງເປັນຕົ້ນແມ່ນຄ່າໃຊ້ຈ່າຍຕ່າງໆ.

d. ເນື້ອໃນລາຍລະອຽດການຮ່ວມມື ລະຫວ່າງ ສອງຝ່າຍຈະໄດ້ດໍາເນີນການລົງນາມບົດບັນທຶກຕາມທີ່ຫຼັງ.

4.ດ້ານນະໂຍບາຍ

- ວິທະຍາໄລແພດສາດ ແລະ ວິທະຍາໄລກິລາ,ທ່ອງທ່ຽວຫງວຽນຢູໃນ 10 ຄົນ ໂຮງຮຽນຍົກເວັ້ນຄ່າຮຽນ,ຄ່າຫໍພັກ 2 ຄົນ ( ຈິນຈິບ )
- ວິທະຍາໄລເຕັກນິກວິຊາຊີບ ໃນ 10 ຄົນຂຶ້ນໄປໃນຂະແໜງດຽວ,ໂຮງຮຽນຈະຍົກເວັ້ນຄ່າຮຽນ,ຄ່າຫໍພັກໃຫ້ 2 ຄົນ ( ຈິນຈິບ ).

ບົດບັນທຶກສະບັບນີ້ໄດ້ສ້າງ 02 ສະບັບເປັນພາສາລາວ, ພາສາຫວຽດ 01 ສະບັບ ແຕ່ລະຝ່າຍຮັກສາໄວ້ຝ່າຍລະ 01 ສະບັບ ແຕ່ລະສະບັບລ້ວນແຕ່ມີຄຸນຄ່າເທົ່າທຽມກັນ.

ບໍລິຄາໄຊ, ວັນທີ 11 ພຶດສະພາ 2017

| ຕາງໜ້າພະແນກ ສກຂ ບໍລິຄໍາໄຊ | ຕາງໜ້າ ບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ່ງ |
| --- | --- |
| ຫົວໜ້າພະແນກ ສກຂ | ຮອງອໍານວຍການວິທະຍາໄລແພດສາດ |
| ຄໍາສີ ຍິມມະລາດ | ຫງວຽນ ວັນ |